ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 001 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 19.4.2016

# ລັດຖະບັນຍັດ
# ຂອງປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
## ວ່າດ້ວຍ ການດັດແກ້ຄຳສັບໃນກົດໝາຍ

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI, ມາດຕາ 67 ຂໍ້ 2 (ສະບັບປັບປຸງ ປີ 2015);

ອີງຕາມກົດໝາຍວ່າດ້ວຍລັດຖະບານ (ສະບັບປັບປຸງ) ສະບັບເລກທີ 69/ສພຊ ລົງວັນທີ 15 ທັນວາ 2015;

ອີງຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 024 /ຄປຈ ລົງວັນທີ 8 ເມສາ 2016.

**ປະທານປະເທດ ແຫ່ງ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະບັນຍັດ**

ມາດຕາ 1 ລັດຖະບັນຍັດສະບັບນີ້ ວາງອອກເພື່ອດັດແກ້ຄຳສັບ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍລັດຖະບານ (ສະບັບປັບປຸງ) ສະບັບເລກທີ 69/ສພຊ ລົງວັນທີ 15 ທັນວາ 2015.

ມາດຕາ 2 ຄຳສັບ ທີ່ໄດ້ດັດແກ້ໃນກົດໝາຍວ່າດ້ວຍລັດຖະບານ (ສະບັບປັບປຸງ) ມີ ດັ່ງນີ້:

1. ຫ້ອງວ່າການລັດຖະບານ ປ່ຽນເປັນ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ;
2. ລັດຖະມົນຕີ, ຫົວໜ້າຫ້ອງວ່າການລັດຖະບານ ປ່ຽນເປັນ ລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ;
3. ລັດຖະມົນຕີປະຈຳຫ້ອງວ່າການລັດຖະບານ ປ່ຽນເປັນ ລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ.

**ມາດຕາ 3** ຄຳສັບທີ່ໄດ້ດັດແກ້ຕາມມາດຕາ 2 ຂອງລັດຖະບັນຍັດສະບັບນີ້ ມີຜົນປະຕິບັດດັ່ງດຽວກັນ ສຳລັບກົດໝາຍສະບັບອື່ນ ທີ່ໄດ້ກຳນົດຄຳສັບດັ່ງກ່າວ.

**ມາດຕາ 4** ບັນດາກະຊວງ, ຂະແໜງການ, ອົງການຈັດຕັ້ງຂອງພັກ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ອົງການປົກຄອງແຂວງ, ນະຄອນຫຼວງ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດລັດຖະບັນຍັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 5** ລັດຖະບັນຍັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

**ປະທານປະເທດ ແຫ່ງ ສປປ ລາວ**

ຈູມມາລີ ໄຊຍະສອນ